ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 18 ຫາ 22 ພະຈິກ 2024




ພິທີເບີກຈ່າຍເງິນທຶນ ໃຫ້ກຸ່ມຜະລິດ ຢູ່ 3 ເມືອງ ຂອງແຂວງ ຫົວພັນ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້




# ພິທີເປີດຈ່າຍເງິນທຶນ ໃຫ້ກຸ່ມຜະລິດ ຢູ່ 3 ເມືອງ ຂອງແຂວງ ຫົວພັນ

ພາບ-ຂ່າວໂດຍ: ພະແນກໂຄສະນາ ແລະ ຂ່າວສານ

ໃນຕົ້ນເດືອນ ພະຈິກ 2024 ນີ້ ໂຄງການພັດທະນາພື້ນຖານໂຄງລ່າງຊົນນະບົດ ແລະ ການຄຸ້ມຄອງອ່າງໂຕ່ງແບບຍືນຍົງ ປະຈຳແຂວງ ຫົວພັນ ໄດ້ຈັດພິທີເປີດຈ່າຍເງິນງວດທີ່ 1 ໃຫ້ກຸ່ມຜະລິດ ຢູ່ 3 ເມືອງຂອງແຂວງ ຫົວພັນ ຄື: ເມືອງ ຊຳເໜືອ, ເມືອງ ວຽງໄຊ ແລະ ເມືອງ ສົບເບົາ ໂດຍການເປັນປະທານ ຂອງ ທ່ານ ໄຈເພັດ ເຮືອງຖາວອນ ຫົວໜ້າພະແນກກະສິກຳ ແລະ ປ່າໄມ້ແຂວງ ທັງເປັນຜູ້ຊີ້ນຳໂຄງການຂັ້ນແຂວງ, ມີການນຳທັງ 3 ເມືອງ, ຜູ້ປະສານງານໂຄງການຂັ້ນແຂວງ, ມີຜູ້ຕາງໜ້າຈາກອົງການອາຫານ ແລະ ການກະເສດ, ພາກສ່ວນທີ່ກ່ຽວຂ້ອງຂອງແຂວງ ແລະ ເມືອງ ຕະຫຼອດຮອດພໍ່ແມ່ປະຊາຊົນຊາວກະສິກອນເຂົ້າຮ່ວມເປັນສັກຂີພິຍານ.

ໂຄງການພັດທະນາພື້ນຖານໂຄງລ່າງຊົນນະບົດ ແລະ ການຄຸ້ມຄອງອ່າງໂຕ່ງແບບຍືນຍົງເປັນໂຄງການທີ່ໄດ້ສົ່ງເສີມການຜະລິດເປັນສິນຄ້າ ຊຸກຍູ້ໃຫ້ຊາວກະສິກອນ ຜະລິດກະສິກຳເພື່ອສົ່ງອອກ ແລະ ສ້າງຖານລາຍຮັບທີ່ແຂງແຮງ, ຊຸກຍູ້ການຜະລິດ ແລະ ປຸງແຕ່ງສິນຄ້າທີ່ມີທ່າແຮງ, ມີຕະຫຼາດຮອງຮັບເພື່ອສົ່ງອອກ, ໄດ້ຮັບທຶນມູນຄ່າທັງໝົດ 51.46 ລ້ານໂດລາສະຫະລັດ ຈັດຕັ້ງປະຕິບັດຢູ່ 120 ບ້ານ ໃນ 10 ເມືອງ ຂອງ 4 ແຂວງພາກເໜືອ ແລະ ໃນນີ້ແຂວງຫົວພັນ ໄດ້ຮັບທຶນທັງໝົດ 03 ເມືອງ ຄື: ເມືອງ ຊຳເໜືອ, ເມືອງ ວຽງໄຊ ແລະ ເມືອງ ສົບເບົາ, ມີຈຳນວນຄອບຄົວທັງໝົດທີ່ໄດ້ຮັບທຶນ 744 ຄອບຄົວ, ໄດ້ຮັບທຶນທັງໝົດ 2,380,800,000 ກີບ (2.3 ຕື້ກວ່າກີບ) ໃນນີ້ເມືອງ ວຽງໄຊ ໄດ້ຮັບທຶນ



ທັງໝົດ 13 ບ້ານ, ຈຳນວນຄອບຄົວທັງໝົດ 439 ຄອບຄົວ, ຈຳນວນເງິນທັງໝົດ 1,404,800,000 ກີບ (1.4 ຕື້ກີບ), ເມືອງສິບເປົາ ມີ 6 ບ້ານ, ມີຈຳນວນຄອບຄົວທັງໝົດ 171 ຄອບຄົວ, ລວມຈຳນວນເງິນທັງໝົດ 547,200,000 ກີບ ແລະ ເມືອງຊຳເໜືອ, ໄດ້ຮັບທຶນມີ 3 ບ້ານ, ມີຈຳນວນຄົວເຮືອນທັງໝົດ 104 ຄອບຄົວ ລວມຈຳນວນເງິນທັງໝົດ 428,800,000 ກີບ, ໂດຍມອບໃຫ້ຄອບຄົວລະ 3,200,000 ກີບ, ເຊິ່ງໂຄງການໄດ້ອຳນວຍຄວາມສະດວກໃຫ້ປະຊາຊົນ, ຊາວກະສິກອນທີ່ຢູ່ໃນບ້ານເປົ້າໝາຍໂຄງການ ໄດ້ນຳໄປເປັນຕົ້ນທຶນ ໃຫ້ ການຜະລິດກະສິກຳຕ່າງໆ ໂດຍສະເພາະການປູກພືດລະດູແລ້ງ ເຊັ່ນ: ຈັດຊື້ແນວພັນພືດ, ຢາປາບສັດຕູພືດ, ອຸປະກອນການປູກຜັກເຮືອນຮົມ, ສວນກ້າເບ້ຍໄມ້ ແລະ ອື່ນໆ, ເພື່ອສົ່ງເສີມການສ້າງລາຍຮັບໃນການປູກພືດລະດູແລ້ງ, ສົ່ງເສີມການຜະລິດກະສິກຳເປັນສິນຄ້າເພື່ອສົ່ງອອກຕາມເປົ້າໝາຍຫຼັກຂອງໂຄງການ. ໃນໂອກາດດັ່ງກ່າວ ທ່ານຫົວໜ້າພະແນກກະສິກຳ ແລະ ປ່າໄມ້ ແຂວງຫົວພັນ ຍັງໄດ້ເນັ້ນໜັກໃຫ້ຊາວກະສິກອນເອົາໃຈໃສ່ສ້າງລາຍຮັບເຂົ້າສູ່ຄອບຄົວ ໂດຍຖືເອົາວຽກງານກະສິກຳເປັນຫຼັກ, ຮຽກຮ້ອງມາຍັງບັນດາຄອບຄົວທີ່ໄດ້ຮັບຜົນປະ ໂຫຍດຈາກໂຄງການ, ຈົ່ງພ້ອມກັນເອົາໃຈໃສ່ຍົກສູງຄວາມຮັບຜິດຊອບ, ເປັນເຈົ້າການໃນການຈັດຕັ້ງປະຕິບັດກິດຈະກຳ ການປູກພືດໃຫ້ເປັນສິນຄ້າໂດຍການນຳໃຊ້ເຕັກນິກການປູກທີ່ທັນສະໄໝຍົກສູງສະມັດຕະພາບການຜະລິດໃຫ້ສູງຂຶ້ນ, ນຳໃຊ້ທຶນທີ່ໄດ້ຮັບໃຫ້ຖືກຕາມເປົ້າໝາຍ ແລະ ນຳໄປໝູນໃຊ້ໃຫ້ເກີດດອກອອກຜົນ ແລະ ບັນລຸຕາມເປົ້າໝາຍທີ່ວາງໄວ້.

**ຄະນະຮັບຜິດຊອບ:**
ທ່ານ ສີປະໄພ ໄຊສົງຄາມ
ທ່ານ ສີສະຫວາດ ທອນດາລາ

**ບັນນາທິການ:**
ທ່ານ ກິດຊະນະ ພົມມະຈັນ
ທ່ານ ໂຊລາ ສິມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄຳແພງ ເກສອນ

**ຈັດໜ້າອອກແບບໂດຍ:**
ທ່ານ ນ. ສີອຳນວນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;